ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

老挝人民民主共和国

和平　独立　民主　统一　繁荣

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 194/ບລຈ

老-中证券[司]字第 194 号

ນະຄອນຫຼວງວຽງຈັນ, ວັນທີ 12 ມິຖຸນາ 2026

2026 年 06 月 12 日，首都万象

ມະຕິ
ກອງປະຊຸມສະພາບໍລິຫານ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026
老-中证券公众公司 2026 年第一次临时董事会会议
决议

- ອີງຕາມ ກົດລະບຽບ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ສະບັບເລກທີ 001/ບລຈ, ລົງວັນທີ 15 ຕຸລາ 2025.

  根据 2025 年 10 月 15 日订立的《老-中证券公众公司章程》（老-中证券[司]字第 001 号）。

ຜ່ານການຄົ້ນຄວ້າພິຈາລະນາ ແລະ ແລກປ່ຽນຄຳເຫັນຂອງບັນດາສະມາຊິກສະພາບໍລິຫານ ຕໍ່ກັບແຕ່ລະວາລະຂອງກອງປະຊຸມສະພາບໍລິຫານ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 ໃນຄັ້ງວັນທີ 11 ມິຖຸນາ 2026, ລາຍຊື່ບັນດາສະມາຊິກສະພາບໍລິຫານປະກອບມີດັ່ງນີ້:

2026 年 06 月 11 日，经各位董事对老-中证券公众公司（下简称“老-中证券”）2026 年第一次临时董事会会议各项议程深入讨论和交换意见，董事会成员名单如下：

1. ທ່ານ ໜູໄຊ ພູມສຸວັນ ປະທານສະພາບໍລິຫານ
   董事长努赛·普苏万
2. ທ່ານ Li ChangWei ຮອງປະທານສະພາບໍລິຫານ
   副董事长李长伟
3. ທ່ານ Zhou Kun ສະມາຊິກສະພາບໍລິຫານ
   董事周昆
4. ທ່ານ Zhang HongBin ສະມາຊິກສະພາບໍລິຫານ
   董事张洪斌
5. ທ່ານ ລິນ ລີ ສະມາຊິກສະພາບໍລິຫານ
   董事李林

6. ທ່ານ ສົມພິງ ບໍລິບຸດ ສະມາຊິກສະພາບໍລິຫານ
   董事颂蓬·波里布
7. ທ່ານ Wang Wei ສະມາຊິກອິດສະລະ
   独立董事王崴
8. ທ່ານ ຣສ. ປອ. ປິຍະ ວິງພິດ ສະມາຊິກອິດສະລະ
   独立董事比亚·翁匹
9. ທ່ານ ນະ ຈັນຕະລີວົງ ສະມາຊິກອິດສະລະ
   独立董事纳·占达里翁

ກອງປະຊຸມສະພາບໍລິຫານ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 ຕົກລົງ
老-中证券公众公司 2026 年第一次临时董事会会议决定

ມາດຕາ 1 ພາຍຫຼັງພິຈາລະນາແລ້ວ, ໄດ້ເຫັນດີຮັບຮອງເປັນເອກະພາບໃນກອງປະຊຸມສະພາບໍລິຫານ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026, ລາຍລະອຽດ ດັ່ງລຸ່ມນີ້:

第一条 经讨论，就老-中证券 2026 年第一次临时董事会会议一致达成以下决议：

1. ເຫັນດີຮັບຮອງ ປັບປຸງແຜນການນຳໃຊ້ທຶນທີ່ປຸກລະດົມໄດ້ຜ່ານການອອກຈຳໜ່າຍຮຸ້ນຕໍ່ມວນຊົນ ຄັ້ງທຳອິດ ຂອງ ບລຈ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 ພິຈາລະນາ ແລະ ຮັບຮອງ ການປັບປຸງແຜນການນຳໃຊ້ທຶນ 10,000,000,000 ກີບຈາກການລົງທຶນສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ມາເປັນການເພີ່ມກະແສເງິນສົດ ຂອງ ບລຈ, ພ້ອມທັງລາຍງານ ສຄຄຊ ແລະ ເປີດເຜີຍຂໍ້ມູນດັ່ງກ່າວຜ່ານ ຕລຊລ. ບລຈ ຈະມີແຜນນຳໃຊ້ທຶນດັ່ງກ່າວ ເຂົ້າໃນການຮັບປະກັນຄ່າໃຊ້ຈ່າຍ Software and Hardware ແຫ່ງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື (MTS) ເພື່ອໃຫ້ພະແນກນາຍໜ້າ ຊື້-ຂາຍ ຫຼັກຊັບ ສາມາດອຳນວຍຄວາມສະດວກແກ່ການຊື້-ຂາຍຫຼັກຊັບ ຂອງລູກຄ້າ, ດຶງດູດນັກລົງທຶນມາເປີດບັນຊີນຳ ບລຈ ພ້ອມທັງເພີ່ມລາຍຮັບນາຍໜ້າຊື້-ຂາຍຫຼັກຊັບ, ສ່ວນຈຳນວນເງິນທີ່ເຫຼືອ ຈະລົງທຶນໃສ່ເງິນຝາກນຳທະນາຄານທຸລະກິດ. ມອບສິດໃຫ້ ບລຈ ຮ່າງແຜນງົບປະມານ Software and Hardware ແຫ່ງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື, ເພື່ອສະເໜີຕໍ່ສະພາບໍລິຫານຮັບຮອງ. ໃນໄລຍະດັ່ງກ່າວ, ເພື່ອຍົກສູງປະສິດທິພາບແຫ່ງການນຳໃຊ້ທຶນຮອບ, ເຫັນດີນຳໃຊ້ທຶນທັງໝົດ 10,000,000,000 ກີບດັ່ງກ່າວ, ລົງທຶນໃສ່ເງິນຝາກນຳທະນຳຄານທຸລະກິດ, ຈົນຮອດສະພາບໍລິຫານເຫັນດີຮັບຮອງ ແຜນງົບປະມານ Software and Hardware ແຫ່ງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື.

   审议通过变更老-中证券首次公开募股募集资金使用方案，同意提交老-中证券 2026 年第一次临时股东会审议将原计划用于设立基金管理公司的 10,000,000,000 基普（约合 306.65 万元），调整为用于补充老-中证券

的流动资金，并向证管委办公厅报告以及通过老交所进行信息披露。老-中证券计划将上述资金用于保障手机证券交易系统（MTS）开发软硬件费用，让经纪业务部门能为客户证券交易提供便利，吸引投资者到老-中证券开户并增加经纪业务收入，剩余资金将用于银行存款投资。授权老-中证券起草手机证券交易系统开发软硬件费用预算，报董事会审批。期间，为提高资金使用效率，允许将上述 10,000,000,000 基普（约合 306.65 万元）全部投资于银行存款，直至董事会审议通过手机证券交易系统开发软硬件费用预算。

2. ເຫັນດີຮັບຮອງ ການລາອອກຂອງຄະນະອຳນວຍການ ບລຈ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 ພິຈາລະນາ ແລະ ຮັບຮອງ, ໂດຍມີລາຍລະອຽດ ດັ່ງນີ້:

   1) ເຫັນດີສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ທ່ານ ລິນ ລີ ລາອອກຈາກຕຳແໜ່ງ ຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍ ຂອງ ບລຈ. ອີງຕາມກົດໝາຍ ແລະກົດລະບຽບທີ່ກ່ຽວຂ້ອງ ຂອງ ສປປ ລາວ, ທ່ານ ລິນ ລີ ຍັງຄົງສືບຕໍ່ດຳລົງຕຳແໜ່ງ ຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍຂອງ ບລຈ ຈົນກວ່າກອງປະຊຸມຜູ້ຖືຮຸ້ນຈະພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍຄົນໃໝ່. ຫຼັງຈາກ ຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍຄົນໃໝ່ເຂົ້າຮັບຕຳແໜ່ງແລ້ວ, ທ່ານ ລິນ ລີ ຜູ້ອຳນວຍການຄົນເກົ່າ ຕ້ອງສືບຕໍ່ຢູ່ບໍລິສັດເພື່ອປະສານງານ ແລະ ສຳເລັດການມອບ-ຮັບວຽກກັບຜູ້ອຳນວຍການຄົນໃໝ່ໃຫ້ຮຽບຮ້ອຍກ່ອນ ຈຶ່ງສາມາດພົ້ນຈາກຕຳແໜ່ງຢ່າງເປັນທາງການໄດ້, ເພື່ອຮັບປະກັນໃຫ້ການບໍລິຫານ ແລະ ການດຳເນີນງານຂອງ ບລຈ ດຳເນີນໄປຢ່າງລຽບລື່ນ.

   2) ຮັບຮອງເຫັນດີ ທ່ານ ພົງສະຫວັດ ລືນາມ ລາອອກຈາກຕຳແໜ່ງ ຮອງຜູ້ອຳນວຍການ ບລຈ. ທ່ານ ພົງສະຫວັດ ລືນາມ ຈະບໍ່ດຳລົງຕຳແໜ່ງຮອງຜູ້ອຳນວຍການຂອງ ບລຈ ອີກຕໍ່ໄປ, ນັບແຕ່ອາລະກອງປະຊຸມສະພາບໍລິຫານນີ້ ໄດ້ຜ່ານການຮັບກອງເຫັນດີ ເປັນຕົ້ນໄປ.

   3) ອີງຕາມ ຄວາມຕ້ອງການ ແລະສະພາບຕົວຈິງ ດ້ານການບໍລິຫານ ຂອງ ບລຈ, ເຫັນດີໃຫ້ທາງຝ່າຍຂາຮຸ້ນ ບໍລິສັດຫຼັກຊັບ ປາຊີຟິກ ຮຸ້ນສ່ວນຈຳກັດ ນຳສະເໜີແຕ່ງຕັ້ງ ຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍ ຜູ້ໃໝ່ ທີ່ມີຄວາມຮູ້ ຄວາມສາມາດ ແລະປະສົບການ ເພື່ອສະເໜີຕໍ່ກອງປະຊຸມຜ้ູຖືຮຸ້ນ ພິຈາລະນາ ແລະ ຮັບຮອງ.

审议通过变更老-中证券管理层成员，同意提交老-中证券 2026 年第一次临时股东会审议，细节如下：

1) 提交股东会审议李林辞去老-中证券总经理兼法定代表人职务。根据老挝相关法律法规，李林继续担任老-中证券总经理兼法定代表人职务，直至股东会审议通过任命新的总经理兼法定代表人。新的总经理兼法定代表人到任后，原总经理李林应当继续留在公司与新任总经理进一

步完成工作交接后方可正式离任，以确保老-中证券经营管理平稳过渡；

2) 彭思晚·勒南辞去老-中证券副总经理职务。自本议案经董事会会议审议通过之日日起，彭思晚·勒南不再担任老-中证券副总经理职务；

3) 根据老-中证券管理实际需求，由太平洋证券股份有限公司股东方推荐任命有知识、能力和经验的新一任总经理，以提交股东会审议。

3. ເຫັນດີຮັບຮອງ ການລາອອກຂອງສະມາຊິກສະພາບໍລິຫານ ບລຈ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 ພິຈາລະນາ ແລະ ຮັບຮອງ, ໂດຍມີລາຍລະອຽດດັ່ງນີ້:

1) ເຫັນດີ ທ່ານ ລິນ ລີ ລາອອກຈາກຕຳແໜ່ງ ສະມາຊິກສະພາບໍລິຫານ ທີ່ມີສ່ວນຮ່ວມໃນການບໍລິຫານ ບລຈ;

2) ເຫັນດີ ທ່ານ ຣສ. ປອ. ປິຍະ ວົງພິດ ລາອອກຈາກຕຳແໜ່ງ ສະມາຊິກອິດສະລະ ບລຈ;

3) ເຫັນດີ ທ່ານ ຫວາງ ເວີຍ ລາອອກຈາກຕຳແໜ່ງ ສະມາຊິກອິດສະລະ ບລຈ;

4) ອີງຕາມ ຄວາມຕ້ອງການ ແລະ ສະພາບຕົວຈິງ ດ້ານການບໍລິຫານ ຂອງ ບລຈ, ເຫັນດີໃຫ້ທາງຝ່າຍຂາຮຸ້ນ ບໍລິສັດຫຼັກຊັບ ປາຊີຟິກ ຮຸ້ນສ່ວນຈຳກັດ ນຳສະເໜີແຕ່ງຕັ້ງ ສະມາຊິກສະພາບໍລິຫານ ທີ່ມີສ່ວນຮ່ວມໃນການບໍລິຫານ 1 ທ່ານ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;

5) ເຫັນດີໃຫ້ທາງຝ່າຍຂາຮຸ້ນ ທະນາຄານສິ່ງເສີມກະສິກຳ ນຳສະເໜີແຕ່ງຕັ້ງ ສະມາຊິກອິດສະລະ 1 ທ່ານເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;

6) ເຫັນດີໃຫ້ທາງຝ່າຍຂາຮຸ້ນ ບໍລິສັດຫຼັກຊັບ ປາຊີຟິກ ຮຸ້ນສ່ວນຈຳກັດ ນຳສະເໜີແຕ່ງຕັ້ງ ສະມາຊິກອິດສະລະ 1 ທ່ານເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;

7) ນັບແຕ່ວັນທີມະຕິຂອງສະພາບໍລິຫານມີຜົນບັງຄັບໃຊ້ພາຍຫຼັງການລົງລາຍເຊັນເປັນຕົ້ນໄປ, ທ່ານ ລິນ ລີ ຍັງສືບຕໍ່ດຳລົງຕຳແໜ່ງສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ, ສ່ວນ ຣສ. ປອ. ປິຍະ ວົງພິດ ແລະ ທ່ານ ຫວາງ ເວີຍ ຍັງສືບຕໍ່ດຳລົງຕຳແໜ່ງສະມາຊິກອິດສະລະຂອງ ບລຈ ຈົນກວ່າກອງປະຊຸມຜູ້ຖືຮຸ້ນຈະໄດ້ພິຈາລະນາຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານຄົນໃໝ່ 1 ທ່ານ ແລະ ສະມາຊິກອິດສະລະຄົນໃໝ່ 2 ທ່ານ. ຫຼັງຈາກບຸກຄົນທີ່ຖືກແຕ່ງຕັ້ງໃໝ່ເຂົ້າຮັບຕຳແໜ່ງແລ້ວ, ຜູ້ດຳລົງຕຳແໜ່ງເດີມຈະຕ້ອງດຳເນີນການມອບ-ຮັບວຽກງານກັບຜູ້ດຳລົງຕຳແໜ່ງໃໝ່ແບບລາຍບຸກຄົນໃຫ້ສຳເລັດຮຽບຮ້ອຍກ່ອນ, ຈຶ່ງຈະສາມາດພົ້ນຈາກຕຳແໜ່ງໄດ້ຢ່າງເປັນທາງການ ເພື່ອຮັບປະກັນໃຫ້ວຽກງານຂອງສະພາບໍລິຫານຂອງ ບລຈ ດຳເນີນໄປຢ່າງຕໍ່ເນື່ອງ ແລະ ລາບລື່ນ.

审议通过变更老-中证券董事会成员，同意提交老-中证券 2026 年第一次临时股东会审议，细节如下：

1) 李林辞去老-中证券执行董事职务；

2) 比亚·翁匹副教授、博士辞去老-中证券独立董事职务；
3) 王崴辞去老-中证券独立董事职务；
4) 根据老-中证券管理实际需求，同意由太平洋证券股份有限公司股东方推荐任命 1 名执行董事，提交股东会审议；
5) 由农业促进银行股东方推荐任命 1 名独立董事，提交股东会审议；
6) 由太平洋证券股份有限公司股东方推荐任命 1 名独立董事，提交股东会审议；
7) 自董事会决议签字生效之日起，李林继续担任执行董事职务，比亚·翁匹副教授、博士和王崴继续担任老-中证券独立董事职务，直至股东会审议通过任命新的执行董事和 2 名独立董事。新的执行董事和 2 名独立董事到任后，原执行董事和独立董事应与新任执行董事和独立董事一对一进一步完成工作交接后方可正式离任，以确保老-中证券董事会工作平稳过渡。

4. ເຫັນດີຮັບຮອງແຜນການກວດສອບຜູ້ອຳນວຍການ ບລຈ ເມື່ອລາອອກ, ໂດຍມີລາຍລະອຽດດັ່ງນີ້:

1) ມອບສິດໃຫ້ຄະນະກຳມະການກວດສອບ ເປັນຜູ້ປະສານງານ ແລະ ຊີ້ນຳວຽກງານກວດສອບຜູ້ອຳນວຍການເມື່ອລາອອກ, ໂດຍໃຫ້ທ່ານ ຫວັ໋ງ ເວີ (Wang Wei) ປະທານຄະນະກຳມະການກວດສອບ ເປັນຜູ້ຮັບຜິດຊອບໃນການຄັດເລືອກອົງການບໍລິການກວດສອບພາຍນອກ, ວາງແຜນງົບປະມານ ແລະ ຕາຕະລາງເວລາປະຕິບັດວຽກງານກວດສອบ, ໂດຍອ້າງອີງການສອบຖາม ແລะสิมห฽บลาถาจากห่ายฝ่าย (บ่ต่ำกว่าสามฝ่าย). ส่อบแผมการละอ฽ดสามาดปะติบัดได้, โดยผ่านการเซ้นฆุมอ฽มเห้นดีธับถอฯ จากถะนะกำมะการกวดสอบ;

2) ให้ถะนะกำมะการกวดสอบ สิ่งบิดลายฯานกวดสอบ และ เอกะสานสะบับแปเป้นพาสาจีนให้กอฯปะชุมสะพาบໍลิหานพิจาละนา, ในเมื่อได้ผ่านการธับธอฯเห้นดีแล้อ, ให้ถืเป้นเอกะสานที่จาเป้น สาลับการ มอบ-ธับ อ฽กฯานละหว่างผู้อานอยการ ผู้เก่า และ ใหม่;

3) ถ่าใช้จ่ายในการกวดสอบบับชีทั้งฆิด แม่นให้ บลจ เป้นผู้ธับผิดชอบ.

审议通过老-中证券总经理离任审计方案，细节如下：

1) 授权审计委员会负责统筹指导总经理离任审计工作，具体由审计委员会主席王崴牵头负责遴选外部审计机构，通过多方比价（不低于三方）拟定审计工作预算和工作计划时间表，具体方案由审计委员会会签同意后实施；
2) 由审计委员会负责将审计报告及中文翻译件提交董事会会议审议，通过后作为新老总经理工作交接的必要文件；
3) 相关审计费用由老-中证券负责。

5. ເຫັນດີຮັບຮອງແຜນຈັດກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປີ 2026, ໂດຍມີລາຍລະອຽດດັ່ງລຸ່ມນີ້:

- ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ: 24 ມິຖຸນາ 2026;
- ມື້ເປີດກອງປະຊຸມຜູ້ຖືຮຸ້ນ: 9 ກໍລະກົດ 2026, ເວລາ: 9:00-10:00 ໂມງ;
- ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ: ຕຶກຕະຫຼາດຫຼັກຊັບລາວ ຊັ້ນ 8;
- ວາລະກອງປະຊຸມຜູ້ຖືຮຸ້ນ:
  - ວາລະ 1: ພິຈາລະນາ ແລະ ຮັບຮອງ ປັບປຸງແຜນການນຳໃຊ້ທຶນທີ່ປຸກລະດົມໄດ້ຜ່ານການອອກຈຳຮຸ້ນຕໍ່ມວນຊົນຄັ້ງທຳອິດ ຂອງ ບລຈ;
  - ວາລະ 2:ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງປະກອບຄະນະອຳນວຍການ ບລຈ;
  - ວາລະ 3: ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງປະກອບສະມາຊິກສະພາບໍລິຫານ ບລຈ.

  审议通过老-中证券 2026 年第一次临时股东会方案，具体细节如下：
- 股权登记日（确定股东参会资格）：2026 年 6 月 24 日
- 股东会召开日期：2026 年 7 月 9 日，时间：10:00-11:00(北京时间)
- 股东会召开地点： 老挝证券交易所大楼 8 层
- 股东会议案：
  - 议案一：审议变更老-中证券首次公开募股募集资金使用方案；
  - 议案二：审议变更老-中证券管理层成员；
  - 议案三：审议变更老-中证券董事会成员。
- ລາຍຊື່ຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ:
  - ທ່ານ ວຽງສະຫວັນ ໄຊຍະລາດ, ຫົວໜ້າຄະນະ;
  - ທ່ານ ນາງ ຈັນພະພອນ ສີຫາລາດ, ຄະນະ;
  - ທ່ານ ນາງ ມຸກດາວະດີ ມິ່ງບຸບຜາ, ຄະນະ.
- 股东会监察及表决委员会名单
  - 万沙万·赛雅拉，主席；
  - 占帕蓬·西哈拉，委员；
  - 慕达瓦帕蒂·明布帕，委员。

ມາດຕາ 2 ການຈັດຕັ້ງປະຕິບັດ

第二条 执行

ມອບໃຫ້ ຄະນະອຳນວຍການ ບລຈ ຈັດຕັ້ງປະຕິບັດຕາມມະຕິກອງປະຊຸມສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງຕັ້ງໜ້າ ໃຫ້ໄດ້ຮັບປະສິດທິຜົນ.

交由老-中证券管理层根据自身职责认真执行和落实本会议决议。

ມາດຕາ 3 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນທີ່ ບັນດາສະມາຊິກສະພາບໍລິຫານລົງລາຍເຊັນໃນຕາຕະລາງລາຍຊື່ ຂອງກອງປະຊຸມສະພາບໍລິຫານ ບລຈ ແລະ ທ່ານປະທານສະພາບໍລິຫານລົງລາຍເຊັນເປັນຕົ້ນໄປ.

第三条 本会议决议经各董事在老-中证券董事会会议决议签字表签字并经董事长签字之日起生效。

ປະທານສະພາບໍລິຫານ

董事长

ໜູໄຊ ພຸມສຸວັນ

努赛·普苏万